ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 4: Fairy Tales (Con.)

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 2:** ເທບນິຍາຍ (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

| | |
|---|---|
| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)** | |
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ເນື້ອໃນຂອງເທບນິຍາ<br>- ສິລະປະຂອງເທບນິຍາຍ | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ເນື້ອໃນຂອງເທບນິຍາຍ<br>- ສິລະປະຂອງເທບນິຍາຍ | **ຄໍາຖາມຫຼັກ (Questions):**<br>1) ເທບນິຍາຍມີເນື້ອໃນເວົ້າເຖິງຫຍັງແດ່?<br>2) ສິລະປະຂອງເທບນິຍາຍເປັນແນວໃດ? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງ ເນື້ອໃນ ແລະສິລະປະຂອງເທບນິຍາຍຂອງລາວ. | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງ ເນື້ອໃນ ແລະສິລະປະຂອງເທບນິຍາຍຂອງລາວ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນໍາການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄໍາຕອບກິດຈະກໍາຂອງນັກສຶກສາ<br>- ການສັງຮວມກິດຈະກໍາ<br>- ຜົນການກວດວຽກບ້ານ |
| **ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)** | |
| - **ສື່ການສອນມີ:**<br>ປຶ້ມຕໍາລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກໍາ. | |

- **ກິດຈະກໍາການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

- **ທວນຄືນບົດຮຽນເກົ່າ**
- ຄູນໍາພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງຄວາມໝາຍ, ຈຸດພິເສດ, ການກໍາເນີດ ແລະ ການຂະຫຍາຍຕົວຂອງເທບນິຍາຍ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 2**

**ເທບນິຍາຍ (ຕໍ່)**

**3. ເນື້ອໃນຂອງເທບນິຍາຍ** ( 35 ນາທີ)

**ກິດຈະກໍາ 1:**

- ຄູຕັ້ງຄໍາຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕໍາລາ

  1) ເທບນິຍາຍມີເນື້ອໃນເວົ້າເຖິງຫຍັງແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກໍາ: (30 ນາທີ)

ເທບນິຍາຍຂອງຊາດລາວເຮົາ ກໍຄືຂອງຊາດອື່ນໆ ໃນໂລກໄດ້ສິ່ງແສງເຖິງຄວາມຮັບຮູ້ ແລະ ວິທີອະທິບາຍ ຂອງຊາວບູຮານຕໍ່ກັບບັນຫາກົກເຄົ້າການກໍາເນີດຂອງໂລກ, ມະນຸດ ແລະ ສັດສາວາສິ່ງທັງຫຼາຍພ້ອມເວົ້າເຖິງການເກີດ, ການຕາຍຕະຫຼອດເຖິງປາກົດການຕ່າງໆ ຂອງທໍາມະຊາດ.

**3.1 ເນື້ອໃນທີ່ເວົ້າເຖິງການກໍາເນີດໂລກ ແລະ ສັດ.**

ເທບນິຍາຍຂອງລາວເຮົາໄດ້ເວົ້າເຖິງການກໍາເນີດໂລກ (ດິນຟ້າອາກາດ) ດ້ວຍຫຼາຍຮູບແບບທີ່ສຸດ. ໃນເທບນິຍາຍ "ເກີດເປັນນໍ້າເປັນດິນ" ຂອງເຜົ່າໄທແດງ ໄດ້ອະທິບາຍວ່າ ແຕ່ກີ້ແຕ່ກ່ອນໃນໂລກນີ້ຍັງບໍ່ທັນມີຫຍັງໝົດ, ຕໍ່ມາແຖນຈຶ່ງໄດ້ລົງມາສ້າງນໍ້າແປງດິນຂຶ້ນ. ໃນບົດເລື່ອງກົກເຄົ້າການກໍາເນີດດິນລາວ ຄົນລາວພັດເວົ້າວ່າ ໃນສະໄໝກ່ອນເທິງໜ້າໂລກຂອງພວກເຮົາ ແມ່ນແມ່ນໍ້າທັງໝົດຕໍ່ມາໃນນໍ້ານັ້ນຈຶ່ງມີໄມ້ລໍາໜຶ່ງໄຫຼມາ ໄມ້ລໍານັ້ນຈຶ່ງເກີດເປັນດິນ. ບົດເທບນິຍາຍ ປູ່ເຍີຍ່າເຍີລົງມາເມືອງລຸ່ມ ໄດ້ອະທິບາຍວ່າໃນສະໄໝນັ້ນແຜ່ນດິນຍັງບໍ່ທັນມີເທື່ອມີແຕ່ນໍ້າຂອງຍາວຢຽດຈົນສຸດສາຍຕາ, ພະຍາແຖນຈຶ່ງເວົ້າຕໍ່ປູ່ເຍີຍ່າເຍີວ່າ: ຢູ່ຕາມທຸກບ່ອນເມື່ອພວກເຈົ້າຍ່າງອອກໄປ ກໍຈະມີແຜ່ນດິນເກີດຂຶ້ນໂລດ ພະແຖນໄດ້ຕັດສັ່ງໃຫ້ປູ່ເຍີຍ່າເຍີສ້າງແຜ່ນດິນດັ່ງນີ້ ເມື່ອປູ່ເຍີຍ່າເຍີຍ່າງໄປຕາມຟອງນໍ້າແຜ່ນດິນກໍຈະເກີດຂຶ້ນໂລດ. ໃນໜັງສືນິທານຂຸນບູລົມມີບາງສະບັບຂຽນວ່າແຖນແຕ່ງ, ແຖນຊັ່ງ, ແຖນຄົມ ແລະແຖນເຖືອກ ທັງສີ່ຕົນນີ້ ຢູ່ຊັ້ນຟ້າເປັນຜູ້ສ້າງໂລກ, ດູແລສັບພະສິ່ງ ແລະ ຄົນ...ເທບນິຍາຍ "ການສ້າງໂລກ" ຂອງຊົນເຜົ່າມົ້ງພັດເວົ້າວ່າ: ທໍາອິດໂລກຂອງພວກເຮົານີ້ຍັງສັບສົນປົນເປກັນຢູ່. ບໍ່ທັນເປັນຟ້າເປັນດິນເທື່ອ. ເພື່ອຈັດຕັ້ງຊັບຊ້ອນຄືນໃໝ່ໃຫ້ເປັນລະບຽບ ແຖນໄດ້ໃຊ້ກໍາລັງແຮງການຫາຍໃຈຂອງຕົນແຕ່ງທ້ອງຟ້າຂຶ້ນກ່ອນພ້ອມຕາເວັນສິບໜ່ວຍ. ດວງເດືອນເກົ້າໜ່ວຍ ແລະ ດວງດາວອື່ນໆ ເພື່ອສະກັດກັ້ນດວງເດືອນ, ດວງດາວຕົກລົງມາດິນແຖນຈຶ່ງເອົາແຜ່ນຟ້າສີຂຽວກັ້ງລັດ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ໄວ້. ຄາວນັ້ນໂລກເຮົາຍັງເປັນດິນເປັນຕົມຊຸ່ມປຽກຢູ່, ດິນດອນເກີດຂຶ້ນ, ກົກໄມ້ໃບຫຍ້າກໍປົ່ງໜໍ່ຈໍ່ແໜງ. ຕໍ່ມາແຖນກໍໄດ້ສ້າງສັດສາວາສິ່ງ ແລະ ອື່ນໆ ເກີດຂຶ້ນ.

ການທີ່ຊາວບູຮານອະທິບາຍໂລກແບບນີ້ ສະແດງເຖິງຄວາມຮັບຮູ້ຍັງຕ່ຳ ແລະ ຍັງອ່ອນນ້ອຍ. ແຕ່ບໍ່ງົມງວາຍຍ້ອນວ່າຢູ່ໃນການອະທິບາຍນັ້ນມີລັກສະນະວັດຖຸນິຍົມຈະແຈ້ງພໍສົມຄວນ ຢູ່ບ່ອນວ່າ: ຊາວບູຮານໄດ້ອະທິບາຍໂລກນັບແຕ່ບ່ອນບໍ່ທັນມີຫຍັງໝົດ. ຕໍ່ມາກໍມີນ້ຳມີດິນ, ກົກໄມ້ ແລະ ສັດສາວາສິ່ງອື່ນໆເກີດຂຶ້ນ. ວັດຖຸກຳເນີດຂຶ້ນ ແລະ ຂະຫຍາຍຕົວໂດຍມີການເໜັງຕີງໃນຕົວມັນເອງ ແລະ ມີການຫັນປ່ຽນແຕ່ວັດຖຸນີ້ຫາວັດຖຸອື່ນ.ໃນສະໄໝກ່ອນເທິງໜ້າໂລກເຮົານີ້ຍັງແມ່ນນ້ຳທັງໝົດ. ແຕ່ຕໍ່ມາຍັງມີໄມ້ລຳໜຶ່ງໄຫຼມາ ໄມ້ລຳນັ້ນຄ່ອຍໆກາຍເປັນດິນ...ການອະທິບາຍຂອງເທບນິຍາຍແບບນີ້ມີລັກສະນະວັດຖຸນິຍົມເຊິ່ງແຕກຕ່າງໃນດ້ານພື້ນຖານກັບເທບນິຍາຍແບບຈິດຕະນິຍົມຖືວ່າພະຜູ້ເປັນເຈົ້າເປັນຜູ້ສ້າງໂລກພ້ອມທັງທຸກສິ່ງທຸກຢ່າງໃນໂລກນີ້.

ມີບາງເທບນິຍາຍເວົ້າເຖິງການສ້າງໂລກຂອງແຖນແບບລວມໆຄື: ແຖນເປັນຜູ້ສ້າງໂລກ ແຖນຈຶ່ງໄດ້ລົງມາສ້າງນ້ຳແປງດິນ ຫຼື ວ່າກໍ່ນ້ຳກໍ່ດິນແມ່ນມາຈາກບົວລະພັນທະ...ແລະ ອື່ນໆ. ແຕ່ວ່າກໍມີເທບນິຍາຍບາງບົດເວົ້າເຖິງການສ້າງໂລກຂອງແຖນການສ້າງໂລກດ້ວຍການການອອກແຮງງານຄື: ຕ້ອງໄດ້ໃຊ້ການເຄື່ອນໄຫວ ຫຼື ວ່າໃຊ້ເຫື່ອແຮງແຖນເອງເຊັ່ນ: ປູ່ເຍີຍ່າເຍີຍ່າງໄປຕາມຟອງນ້ຳແຜ່ນດິນກໍຈະເກີດຂຶ້ນໂລດ ຫຼື ຈະແຈ້ງລະອຽດກວ່ານັ້ນຄື: ການສ້າງໂລກຂອງແຖນໃນເທບນິຍາຍ “ການສ້າງໂລກ” ຂອງເຜົ່າມົ້ງທີ່ໄດ້ກ່າວມາຂ້າງເທິງນັ້ນ. ເຖິງແມ່ນແຖນມີລິດເດດ, ຮູ້ທຸກສິ່ງທຸກຢ່າງ ແລະ ສ່ອງແສງເຖິງທຸກອັນທຸກແນວ ແຕ່ເມື່ອສ້າງໂລກແຖນຍັງໃຊ້ເຫື່ອແຮງໃນການອອກແຮງງານຂອງຕົນ. ແນ່ນອນວ່າເລື່ອງແບບນີ້ພຽງແຕ່ເປັນຈິດສຳນຶກທີ່ສົມທຽບການສ້າງໂລກຂອງແຖນໃສ່ການອອກແຮງງານຂອງຄົນເຮົາເທົ່ານັ້ນ ແຕ່ມັນກໍໄດ້ສະແດງໃຫ້ເຫັນຄວາມຮັບຮູ້ອັນຖືກຕ້ອງ ແລະ ກ້າວໜ້າຂອງຄົນສະໄໝກ່ອນ ບໍ່ພຽງແຕ່ຢາກອະທິບາຍໂລກເທົ່ານັ້ນ ຫາກຍັງມີຄວາມໄຝ່ຝັນຢາກດັດສ້າງໂລກອີກດ້ວຍ. ຊາວບູຮານນອກຈາກອະທິບາຍກົກເຄົ້າກຳເນີດຂອງໂລກແລ້ວ ເຂົາເຈົ້າຍັງອະທິບາຍການກຳເນີດມະນຸດອີກດ້ວຍ.

**3.2 ເນື້ອໃນທີ່ເວົ້າເຖິງການກຳເນີດມະນຸດ ແລະ ຊາດຕົນ.**

ກົກເຄົ້າການກຳເນີດມະນຸດກໍແມ່ນບັນຫາໃຫຍ່ອັນໜຶ່ງ ທີ່ຊາວບູຮານສົນໃຈຊອກຮູ້ ແລະ ອະທິບາຍແບບມີລັກສະນະເອກະພາບກັນວ່າ: ມະນຸດກໍຄືສັດສາວາສິ່ງອື່ນໆ ແມ່ນເກີດມາຈາກແຖນເປັນຜູ້ສ້າງ, ແຖນເປັນຜູ້ປັ້ນແຕ່ງວັດຖຸສິ່ງຂອງ ແລະ ນັບທັງມະນຸດອີກດ້ວຍ. ຢູ່ໃນເທບນິຍາຍ  “ການສ້າງໂລກ” ຂອງເຜົ່າມົ້ງເວົ້າວ່າ: ແຖນໄດ້ເອົາດິນມາປັ້ນເປັນຄົນ. ການອະທິບາຍແບບນີ້ເກີດຈາກຄວາມຄິດຂອງຊາວບູຮານທີ່ວ່າທຸກສິ່ງທຸກຢ່າງເກີດຈາກດິນ. ມະນຸດກໍແມ່ນວັດຖຸຊະນິດໜຶ່ງ. ດັ່ງນັ້ນ, ມະນຸດກໍເກີດຈາກດິນ ເຊິ່ງແມ່ນວັດຖຸບ່ອນເພິ່ງພາອາໄສຂອງມະນຸດ ແລະ ລ້ຽງມະນຸດ, ແມ່ນແມ່ກຳເນີດຂອງສັບພະສິ່ງ ແລະ ວັດຖຸອື່ນໆອີກຫຼາຍຢ່າງ. ດັ່ງນັ້ນ, ຊາວບູຮານຈຶ່ງຖືວ່າດິນເປັນສິ່ງສັກສິດອັນໜຶ່ງ.

ນອກຈາກການອະທິບາຍກົກເຄົ້າການກຳເນີດຂອງມະນຸດແລ້ວ.ເທບນິຍາຍຂອງລາວຍັງອະທິບາຍກົກເຄົ້າການກຳເນີດຂອງຊາດຕົນເອງວ່າ: ທຸກຊົນເຜົ່າທີ່ຢູ່ໃນວົງສາຄະນາຍາດຊາດລາວເຮົາຢູ່ນີ້ລ້ວນແຕ່ເກີດມາຈາກນ້ຳເຕົ້າ

ປຸງໜ່ວຍດຽວກັນເຊັ່ນ: ເທບນິຍາຍ "ໝາກນ້ຳເຕົ້າປຸງ" ຂອງຊົນເຜົ່າ ໄທ-ລາວ "ນ້ຳຖ້ວມໂລກ" ຂອງເຜົ່າກຶມມຸ ແລະ ອື່ນໆ.

ລະບົບເທບນິຍາຍນ້ຳເຕົ້າປຸງ ແມ່ນບົດເລື່ອງທີ່ເກົ່າແກ່ທີ່ສຸດຂອງລາວເຮົາມັນແຜ່ຂະຫຍາຍຢ່າງກວ້າງຂວາງໃນໝູ່ປະຊາຊົນບັນດາເຜົ່າຢູ່ທ້ອງຖິ່ນຕ່າງໆນັ້ນມີຫຼາຍບັ້ນຫຼາຍຕອນ ແລະ ມີຫຼາຍສະບັບຕ່າງກັນ, ອັນເປັນການສະແດງໃຫ້ເຫັນວ່າບົດເລື່ອງເຫຼົ່ານັ້ນເກີດຂຶ້ນໄລຍະເວລາແຕກຕ່າງກັນ, ທັງສ່ອງແສງເຖິງຄວາມຮັບຮູ້, ສ່ອງແສງສັງຄົມ ແລະ ຈິດສະຫງວນຄວາມງາມຂອງຄົນລາວ ໃນຍຸກສະໄໝປະຫວັດສາດຕ່າງກັນ.

ບົດເທບນິຍາຍນ້ຳເຕົ້າປຸງສ່ວນຫຼາຍໄດ້ອະທິບາຍເອກະພາບກັນວ່າ: ທຸກຊົນຊາດຊົນເຜົ່າລ້ວນແຕ່ເກີດຈາກນ້ຳເປົ້າປຸງໜ່ວຍດຽວ. ຄວາມຄິດ ແລະ ວິທີອະທິບາຍນີ້ເກີດມາຈາກຈິດສຳນຶກ ແລະ ການຄຳນຶງແບບງ່າຍດາຍຂອງຄົນສະໄໝກ່ອນກ່ຽວກັບສາຍພົວພັນແບບພິເສດ ແລະ ມີຈິງລະຫວ່າງຄົນກັບນ້ຳເຕົ້າ. ຄວາມຄິດທີ່ວ່າຄົນເຮົາເກີດມາຈາກໝາກໄມ້ນັ້ນ ແມ່ນໝາກຜົນຂອງຄວາມຮັບຮູ້ຂອງຄົນສະໄໝກ່ອນ. ຄວາມຄິດແບບນີ້ບໍ່ສະເພາະມີແຕ່ຢູ່ໃນປະຊາຊົນລາວເຮົາເທົ່ານັ້ນ. ຫາກຍັງເຄີຍມີ ແລະ ເຄີຍແຜ່ຂະຫຍາຍຢ່າງກວ້າງຂວາງຢູ່ໃນມວນຊົນຫຼາຍຊາດ. ຫຼາຍເຜົ່າຢູ່ຫຼາຍແຫ່ງຫົນໃນໂລກເຮົານີ້. ສະໄໝກ່ອນຊາວບູຮານໄດ້ດຳລົງຊີວິດຕິດພັນກັບທຳມະຊາດມາເປັນເວລານານທີ່ສຸດ. ດັ່ງນັ້ນ, ເຂົາເຈົ້າຈຶ່ງມີການສັງເກດ ແລະ ຄຳນຶງ, ສົມທຽບລະຫວ່າງຊີວິດຕິດພັນກັບທຳມະຊາດ ອັນພາໃຫ້ເກີດມີຄວາມຄຳນຶງເຖິງການກຳເນີດແບບມະຫັດສະຈັນ. ຄວາມຄິດແບບນີ້ເກີດຂຶ້ນຍ້ອນວ່າ: ຄົນບູຮານບໍ່ທັນເຂົ້າໃຈກ່ຽວກັບເຫດການການກຳເນີດເຂົາເອງ ອັນພາໃຫ້ເຂົາເຈົ້າຄິດຢ່າງງ່າຍດາຍລະຫວ່າງການກຳເນີດ, ການຂະຫຍາຍຕົວຂອງມະນຸດກັບການເປັນດອກອອກໝາກຂອງພືດພັນຕ່າງໆ. ດັ່ງນັ້ນ, ຄົນສະໄໝກ່ອນຈຶ່ງຖືວ່າໝາກໄມ້ເປັນສັນຍາແຫ່ງການອອກແມ່ແຜ່ລູກ ມີໝາກໄມ້ຫຼາຍຊະນິດກາຍເປັນຮູບພາບຂອງແນວຄິດດັ່ງກ່າວ ໂດຍສະເພາະແມ່ນປະເພດໝາກໄມ້ທີ່ມີແກ່ນຫຼາຍເຊັ່ນ: ໝາກຫຸ່ງ, ໝາກສາລີ ແລະ ໝາກນ້ຳເຕົ້າເປັນຕົ້ນ.

ໃນເທບນິຍາຍນ້ຳເຕົ້າປຸງບາງຕອນຂຽນວ່າ ຢູ່ໃນໝາກນ້ຳເຕົ້າໜ່ວຍນັ້ນມີສຽງປາກເວົ້າ, ສຽງຮ້ອງໂຫ່ວົນແຊວຂອງຄົນ. ເມື່ອເອົາເຫຼັກຊີ ແລະ ເອົາສິ່ວມາເຈາະເປັນຮູແລ້ວເລີຍມີແມ່ຍິງ, ຜູ້ຊາຍລຸລັ່ງທັ່ງເທອອກມາຢ່າງຫຼວງຫຼາຍເປັນເວລາສາມວັນສາມຄືນຈຶ່ງຄ່ອຍໝົດ...ການເລົ່າແບບນີ້ສະແດງຢ່າງຈະແຈ້ງທີ່ສຸດເຖິງຄວາມສຳນຶກກ່ຽວກັບການກຳເນີດແບບເບື້ອງນິດລຽນຕິດ ແລະ ມາກມາຍກ່າຍກອງຂອງມະນຸດ. ຮູບພາບໝາກນ້ຳເຕົ້າຈຶ່ງເປັນສັນຍາລັກເຖິງກົກເຄົ້າການກຳເນີດຂອງມະນຸດນັ້ນໄດ້ຮັບການປັ້ນແຕ່ງຂຶ້ນໂດຍຜ່ານການຮັບຮູ້ ແລະ ການສົມທຽບຂອງຄົນສະໄໝກ່ອນກ່ຽວກັບການຄ້າຍຄືກັນລະຫວ່າງການກຳເນີດ ແລະ ການຂະຫຍາຍຕົວຂອງໝາກນ້ຳເຕົ້າປຸງກັບການປະສູດລູກຂອງຜູ້ເປັນແມ່. ການອະທິບາຍວ່າ: "ທຸກຄົນລ້ວນແຕ່ກຳເນີດມາຈາກໝາກນ້ຳເຕົ້າປຸງໜ່ວຍດຽວ" ນີ້ຍັງມີເນື້ອໃນປະຫວັດສາດ ແລະ ທັງມີເນື້ອໃນດ້ານສັງຄົມຢ່າງຈະແຈ້ງ.

ຄວາມຄິດທີ່ວ່າຄົນເກີດມາຈາກໝາກນ້ຳເຕົ້າປຸງແມ່ນແນວຄິດຂອງການກຳເນີດແບບທຳມະຊາດ ແລະ ມະຫັດສະຈັນທັງເປັນຮູບພາບທີ່ສວຍງາມ ແລະ ມີຊີວິດຊີວາທີ່ສຸດ ຄວາມຄິດອັນນີ້ເກີດມາຈາກ ການພົວພັນ ແລະ ມີການເລືອກເຟັ້ນ ດ້ານວັດທະນາທຳລະຫວ່າງຊົນເຜົ່າຂອງລາວເຮົາ ເຊິ່ງຍາມໃດກໍມີຄວາມປາດຖະໜາຢາກໃຫ້ມີການພົວພັນ ຮັກແພງເຊິ່ງກັນ ແລະ ກັນບົນຈິດໃຈອ້າຍນ້ອງຮ່ວມຊາດດຽວກັນ ບັນດາຊົນເຜົ່າຂອງລາວຍັງໄດ້ຝາກຝັງ

ຈິດໃຈຮັກຊາດ, ຮັກບ້ານເກີດເມືອງນອນຂອງລາວໄວ້ກັບຮູບພາບໝາກນໍ້າເຕົ້າປຸງ ໝາກນໍ້າເຕົ້າປຸງໜ່ວຍດຽວເທົ່ານັ້ນ (ພູວົງ ໜໍ່ດາລາ ແລະຄະນະ, 2018).

**3.3 ເນື້ອໃນທີ່ເວົ້າເຖິງປາກົດການຕ່າງໆຂອງທຳມະຊາດ.**

ຄຽງຄູ່ກັບການອະທິບາຍກົກເຄົ້າການກຳເນີດໂລກ, ກຳເນີດມະນຸດແລ້ວຊາວບູຮານຍັງໄດ້ອະທິບາຍປາກົດການຕ່າງໆຂອງທຳມະຊາດອີກ. ໂດຍສະເພາະແມ່ນສິ່ງທີ່ມີຄວາມໝາຍອັນໃຫຍ່ຫຼວງຕໍ່ການອອກແຮງງານຜະລິດຜົນ ແລະ ການດຳລົງຊີວິດຂອງເຂົາເຈົ້າເຊັ່ນວ່າ: ຕາເວັນ, ດວງເດືອນ, ໄພແຫ້ງແລ້ງ, ຝົນຕົກ, ນໍ້ານອງຕ່າງໆ. ຢູ່ໃນໂລກຈັກກະວານຕາເວັນ ແລະ ດວງເດືອນບໍ່ສະເພາະແຕ່ມີຜົນສະທ້ອນອັນໃຫຍ່ຫຼວງຕໍ່ການອອກແຮງງານຜະລິດຜົນ ແລະ ດຳລົງຊີວິດຂອງຄົນເຮົາ ເຊິ່ງຢູ່ໃນເລື່ອງ: “ຍ້ອນຫຍັງຕາເວັນຈຶ່ງຂຶ້ນ” ຍັງໄດ້ກ່າວວ່າ ແຕ່ກ່ອນມະນຸດເຮົາມີຄວາມທຸກຍາກຕໍ່ກັບການດຳລົງຊີວິດຂອງເຂົາເຈົ້າ, ຍ້ອນວ່າມີດວງຕາເວັນ ແລະ ດວງເດືອນຫຼາຍໜ່ວຍທີ່ປາກົດຢູ່ທ້ອງຟ້າຈຶ່ງເຮັດໃຫ້ກາງເວັນແສງແດດແຮງກ້າຫຼາຍມະນຸດບໍ່ສາມາດທົນຕໍ່ການເຮັດວຽກ ແລະ ການທຳມາຫາກິນເພາະວ່າແດດແຮງຫຼາຍ, ແຕ່ຍາມກາງຄືນເດືອນພັດຍາວເກີນໄປຈົນເຮັດໃຫ້ມະນຸດມີຄວາມອຶດຫິວ. ດ້ວຍເຫດນັ້ນປະຊາຊົນຈຶ່ງເຄີຍເຊື່ອຖືວ່າຕາເວັນ ແລະ ດວງເດືອນກໍຄືແຜ່ນທໍລະນີ ເປັນສິ່ງສັກສິດ. ການເຊື່ອຖືອັນນີ້ຍັງມີຮ່ອງຮອຍເຫຼືອຄ້າງຢູ່ນຳປະຊາຊົນບາງຊົນເຜົ່າຂອງລາວເຮົາໃນທຸກວັນນີ້.ໜ້າດິນທັງໃນໂລກພິພົບກໍແຕກແຫງເປັນຂຸມເປັນໂນນໄປໝົດ ແລະ ບາງບ່ອນກໍເປັນຂຸມໃຫຍ່ ແລະ ເລິກກວ້າງ. ນອກຈາກນີ້ ຢູ່ໃນເລື່ອງ: “ນາງອົ້ວຕາບຟ້າ” ໄດ້ກ່າວວ່າ ສ່ວນຢູ່ໃຈກາງຂອງທະເລກໍເກີດມີພະຍຸປັ່ນປ່ວນ ຕາມປ່າເຂົາພະນອມອັນກໍເກີດໄຟ ໄໝ້ໄປໃນທຸກແຫ່ງທຸກຫົນ. ນໍ້າທີ່ຢູ່ໃນໃຈກາງຂອງໜ່ວຍໂລກກໍໄຫຼຟົດຂຶ້ນມາເປັນກະແສໃຫຍ່ແລ້ວເກີດເປັນຟອງໄຫຼລົງໄປໂຮມເປັນມະຫາສະໝຸດອັນກວ້າງໄກສຸດສາຍຕາ. ສິ່ງດັ່ງກ່າວໄດ້ກາຍເປັນສິ່ງສັກສິດທີ່ຕິດຕົວຢູ່ໃນແນວຄິດຂອງປະຊາຊົນມາຈົນເຖິງທຸກວັນນີ້ (ພູວົງ ໜໍ່ດາລາ ແລະຄະນະ, 2018).

**3.4 ເນື້ອໃນທີ່ເວົ້າເຖິງການຕໍ່ສູ້ຕ້ານໄພທຳມະຊາດ.**

ປະຫວັດສາດແຫ່ງການຂະຫຍາຍຕົວຂອງສັງຄົມມະນຸດ ແມ່ນປະຫວັດສາດແຫ່ງການຕໍ່ສູ້ອັນທຸກຍາກລຳບາກ ແລະ ຍາວນານຕ້ານໄພທຳມະຊາດ, ຕ້ານການກົດຂີ່ຂອງຊົນຊັ້ນປົກຄອງຢ່າງບໍ່ຢຸດຢັ້ງເຖິງຊີວິດອິນຊີ ແລະ ເຄີຍຄອບຄອງ, ໜີບເຕັງຊີວິດການເປັນຢູ່ຂອງຊາວບູຮານ. ຍ້ອນແນວນັ້ນ, ມະນຸດເຮົາໄດ້ຕໍ່ສູ້ຕ້ານໄພທຳມະຊາດຢ່າງຫຍຸ້ງຍາກລຳບາກ ແລະ ຍືດເຍື້ອຍາວນານດ້ວຍຄວາມເດັດດ່ຽວໜຽວແໜ້ນ, ອົງອາດກ້າຫານ ເສຍສະຫຼະຢ່າງສູງສົ່ງ ແລະ ມີຄວາມເຊື່ອໝັ້ນຕໍ່ກຳລັງວັງຊາອັນເຂັ້ມແຂງ ແຮງກ້າຂອງຕົນຢູ່ສະເໝີ. ນັ້ນແມ່ນຮູບພາບຄວາມສຳນຶກຂອງຊາຍສະກັນຜູ້ມີກຳລັງບັນຊາ. ໃນເລື່ອງ ທີ່ໄດ້ຈັບພະແບກຂວານເຂົ້າປ່າຕັດໄມ້ມາເຮັດທະນູ ແລ້ວຍິງໃສ່ຕາເວັນ ແລະ ເດືອນເພື່ອກູ້ເອົາຊີວິດມະນຸດ, ສັດສາວາສິ່ງ ແລະ ພືດພັນຕ່າງໆ ໃຫ້ພົ້ນຈາກຄວາມຕາຍ ຍ້ອນໄພແຫ້ງແລ້ງ. ນັ້ນແມ່ນຮູບພາບຕົວລະຄອນປູ່ເຍີຍ່າເຍີ ໃນລະບົບເທບນິຍາຍຂອງລາວເຮົາອັນເປັນຮູບພາບທີ່ສວຍງາມ ແລະ ເດັ່ນທີ່ສຸດໃນການຕໍ່ສູ້ຕ້ານໄພທຳມະຊາດ, ອອກແຮງງານດັດສ້າງທຳມະຊາດ ແລະ ສ້າງສາບ້ານເມືອງໃນສະໄໝກ່ອນ.

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ປະຊາຊົນໄດ້ຖືເອົາຕົວລະຄອນປູ່ເຍີຍ່າເຍີແມ່ນບັນພະບູລຸດ. ເປັນປູ່ຍ່າຕາຍາຍຂອງຕົນເນື່ອງຈາກເຂົາເຈົ້າໄດ້ມີຄຸນງາມຄວາມດີຫຼາຍທີ່ສຸດຕໍ່ຊາວບ້ານຊາວເມືອງ. ດັ່ງນັ້ນ, ຮູບພາບຕົວລະຄອນປູ່ເຍີຍ່າເຍີຈຶ່ງບໍ່ສະເພາະເປັນສິ່ງສັກສິດທາງຄວາມເຊື່ອຖືໃນຮີດຄອງປະເພນີລາວເທົ່ານັ້ນ. ຫາກຍັງມີຊີວິດຊີວາໃນຄະຕິຈິດປະຈຳວັນຂອງປະຊາຊົນລາວບັນດາເຜົ່າຕະຫຼອດມາ. ນອກຈາກນີ້ແລ້ວ ຢູ່ໃນເລື່ອງ "ປູ່ສີກັບຍ່າສາ" ຍັງໄດ້ກ່າວເຖິງຄວາມສະຫຼາດຫຼັກແຫຼມທີ່ໄດ້ຕໍ່ສູ້ກັບໄພທຳມະຊາດ ເພື່ອຊ່ວຍເຫຼືອປະຊາຊົນທີ່ໄດ້ຮັບຄວາມທຸກຍາກລຳບາກໃນການທຳມາຫາກິນ ໃນເລື່ອງກ່າວວ່າ ປູ່ສີເວົ້າວ່າມັນຈະໄປຍາກແມ່ນຫຍັງກໍພຽງແຕ່ ເອົາຫອຍສາມໜ່ວຍມາເຮັດເປັນກ້ອນເສົ້າ, ເອົາຂີ້ກະເດືອນມາເຮັດເປັນຟືນ, ເອົາອອງປູມາເຮັດໝໍ້ ເຮົາກໍເຮັດຄືວ່າຈະຕັ້ງໝໍ້ຄົວກິນນັ້ນ ການເຮັດສິ່ງນີ້ແມ່ນເຮັດໃຫ້ມັນເຂັດມັນຂວາງ ເມື່ອເຫດການເປັນແນວນັ້ນແລ້ວ ປູ່ສີກັບຍ່າສາ ກໍຮີບ ຟ້າວອອກຈາກບ່ອນນັ້ນແລ້ວກັບຄືນສູ່ໝູ່ບ້ານເຫດການນີ້ໄດ້ເກີດມີຟ້າລົມ, ຝົນຕົກ, ຟ້າມືດ, ຟ້າມົວ ຟ້າແຜດຟ້າຜ່າມາໃສ່ກ້ອນຫີນໃຫຍ່ກ້ອນນັ້ນເຮັດໃຫ້ມັນແຕກມຸ່ນແລ້ວລະເບີດກະຈາຍໄປ ແລ້ວ ນ້ຳກໍໄຫຼລົງມາສູ່ໝູ່ບ້ານ ນາບອມ ນັ້ນຄືເກົ່າດັ່ງເດີມໃນເມື່ອກ່ອນ ປະຊາຊົນໃນບ້ານໄດ້ມີຄວາມດີອົກດີໃຈທີ່ບ້ານຂອງຕົນເອງຈະກັບມາເປັນດັ່ງເດີມອີກແລ້ວ ຈາກເຫດການອັນໂຫດຮ້າຍຄັ້ງນັ້ນໄດ້ຜ່ານພົ້ນໄປແລ້ວ ໝູ່ບ້ານແຫ່ງນີ້ກໍໄດ້ກັບຄືນມາສູ່ສະພາບປົກກະຕິຈາກນັ້ນມາໝູ່ບ້ານແຫ່ງນີ້ກໍໄດ້ກັບຄືນມາສູ່ຄວາມອຸດົມສົມບູນອີກຄັ້ງໜຶ່ງ (ພູວົງ ໝໍ່ດາລາ ແລະຄະນະ, 2018).

**4. ສິລະປະຂອງເທບນິຍາຍ** (25 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ສິລະປະຂອງເທບນິຍາຍເປັນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (20 ນາທີ)

ເທບນິຍາຍ ແມ່ນໝາກຜົນໃນການປະດິດຄິດແຕ່ງຂອງຊາວບູຮານ ເຊິ່ງສ່ອງແສງເຖິງການດຳລົງຊີວິດຂອງຄົນສະໄໝກ່ອນ. ໃນຍຸກສະໄໝປັດຈຸບັນເທບນິຍາຍບໍ່ອາດກຳເນີດເກີດຂຶ້ນໄດ້ອີກແລ້ວ.ຢູ່ໃນເທບນິຍາຍມີສິ່ງທີ່ໃກ້ສິດຕິດແທດກັບແນວຄິດຈິດໃຈຂອງຄົນເຮົາໃນທຸກວັນນີ້ຄື: ນ້ຳໃຈຕໍ່ສູ້ອັນທໍລະຫົດອົດທົນ ແລະ ອົງອາດກ້າຫານຂອງບັນພະບູລຸດເຮົາພ້ອມຄວາມມຸ່ງມາດປາຖະໜາອັນແຮງກ້າທີ່ສູ້ຊົນເພື່ອເອົາຊະນະສັດຕູ ຫຼື ອັນຊົ່ວຮ້າຍມາແຕ່ບູຮານນະການ.

ເທບນິຍາຍ ແມ່ນປະເພດເລື່ອງເລົ່າທີ່ຈັບອົກຈັບໃຈຂອງຄົນເຮົາຢູ່ໃນຍຸກສະໄໝ. ອັນເນື່ອງມາຈາກຄຸນຄ່າດ້ານສິລະປະອັນສູງສົ່ງ ເຊິ່ງສະແດງອອກດ້ານເນື້ອໃນຄວາມໝາຍທີ່ມີລັກສະນະສັດຈະທັດ ແລະ ຮູບການປະດິດແຕ່ງສິລະປະທີ່ມີລັກສະນະເຫຼືອເຊື່ອ, ເພີນຈິດ ແລະ ມະຫັດສະຈັນ. ເທບນິຍາຍໄດ້ສ່ອງແສງໃຫ້ເຫັນມານະຈິດ ແລະ ບັນຍາກາດໃນການເຄື່ອນໄຫວດ້ວຍຮູບການສິລະປະແບບພິເສດ, ດູດດື່ມ ແລະ ຈັບອົກຈັບໃຈທີ່ສຸດ. ເຊິ່ງຄົນເຮົາໃນສະໄໝໃໝ່ບໍ່ອາດສາມາດລອກແບບໄດ້ (ພູວົງ ໝໍ່ດາລາ ແລະຄະນະ, 2018).

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

ຈິດສຳນຶກຂອງຊາວບູຮານເຖິງແມ່ນວ່າຍັງອ່ອນນ້ອຍ ແຕ່ອຸດົມສົມບູນ ແລະ ມີຊີວິດຊີວາທີ່ສຸດ.ເຂົາສາມາດປະດິດແຕ່ງພາບທີ່ສວຍງາມ ແລະ ມະຫັດສະຈັນຂຶ້ນມາໄດ້. ຮູບພາບນ້ຳເຕົ້າປຸງ, ເຄືອເຂົາກາດໃນເທບນິຍາຍຂອງລາວເຮົາລ້ວນແຕ່ໄດ້ສ້າງຂຶ້ນດ້ວຍຈິດສຳນຶກອັນອຸດົມສົມບູນ ແລະ ມີລັກສະນະສັງລວມບົນພື້ນຖານການສັງເກດ, ຊອກຮູ້ ແລະ ອະທິບາຍປາກົດການທຳມະຊາດຂອງຊາວບູຮານ. ຮູບພາບເຄືອເຂົາກາດດົກໜາປົກຫຸ້ມເມືອງລຸ່ມ ຈົນແດດບໍ່ສາມາດສ່ອງລົງມາໄດ້ ນີ້ແມ່ນຮູບພາບອັນເປັນສັນຍາລັກໃຫ້ແກ່ປ່າດົງພົງໄພອັນຕຶບໜາ ໃນເມືອງລາວສະໄໝກ່ອນເຊິ່ງເປັນໄພທຳມະຊາດອັນໜຶ່ງທີ່ສົ່ງຜົນສະທ້ອນເຖິງການທຳມາຫາກິນຂອງຊາວບູຮານ. ໃນເງື່ອນໄຂປະກອບການຜະລິດຍັງຫຼ້າຫຼັງຊາວບູຮານຍັງບໍ່ທັນມີຄວາມສາມາດຜາບແຜ້ປາກົດການເຫຼົ່ານັ້ນ. ສະນັ້ນ, ຈຶ່ງສຳນຶກ ແລະ ປັ້ນແຕ່ງຮູບພາບຕົວລະຄອນປູ່ເຍີຍ່າເຍີຂຶ້ນມາ ເປັນບັນພະບູລຸດຜູ້ເກັ່ງກ້າສາມາດ, ຂານອາສາໄປຕັດເຄືອເຂົາກາດໃຫ້ຈົບໄດ້. ໝາກນ້ຳເຕົ້າປຸງເປັນໝາກໄມ້ທຳມະດາກໍໄດ້ຖືກສຳນຶກ ແລະ ຍົກຂຶ້ນມາເປັນຮູບພາບອັນເປັນສັນຍາລັກເຖິງຜູ້ເປັນແມ່ຂອງມວນມະນຸດເວົ້າລວມ ເວົ້າສະເພາະຂອງປະເທດລາວ. ຈິດສຳນຶກແມ່ນຮູບພາບສິລະປະ ແລະ ກໍແມ່ນທັງເນື້ອໃນຂອງເທບນິຍາຍ, ທັງແມ່ນປັດໃຈຕັດສິນທາງການກຳເນີດ ແລະການຂະຫຍາຍຕົວຂອງເທບນິຍາຍອີກດ້ວຍ (ອ່ອນແກ້ວ ນວນນະວົງ ແລະຄະນະ, 2008).

ເທບນິຍາຍ ແມ່ນການສ່ອງແສງສະແດງເຖິງໂລກກະທັດ, ແມ່ນໝາກຜົນໃນການປະດິດແຕ່ງຂອງຄົນທີ່ດຳລົງຊີວິດຢູ່ໃນສັງຄົມທີ່ບໍ່ມີຊົນຊັ້ນ. ໃນຍຸກສພໄໝນີ້ເທບນິຍາຍບໍ່ສາມາກຳເນີດຂຶ້ນໄດ້ອີກແລ້ວ. ແຕ່ຢ່າງໃດກໍຕາມເທບນິຍາຍຍັງແມ່ນປະເພດເລື່ອງເລົ່າທີ່ຈັບອົກຈັບໃຈແກ່ຄົນຢູ່ໃນຍຸກສະໄໝ, ອັນເນື່ອງມາຈາກຄຸນຄ່າດ້ານສິລະປະອັນສູງສົ່ງເຊິ່ງສະແດງອອກໃນເນື້ອໃນຄວາມໝາຍທີ່ມີລັກສະນະສັດຈະທັດ ແລະຮູບການປະດິດແຕ່ງສິລະປະທີ່ມີລັກສະນະເຫຼືອເຊື່ອ, ເພີນຈິດ ແລະມະຫັດສະຈັນຂອງມັນ. ຢູ່ໃນເທບນິຍາຍມີສິ່ງທີ່ໃກ້ສິດຕິດແທດກັບແນວຄິດຈິດໃຈຂອງຄົນເຮົາໃນທຸກມື້ນີ້ຄືນ້ຳໃຈຕໍ່ສູ້ອັນທໍລະຫົດອົດທົນ ແລະອົງອາດກ້າຫານທີ່ສຸດຂອງບັນພະບູລຸດພວກເຮົາພ້ອມທັງຄວາມມຸ່ງມາດປາດຖະໜາອັນແຮງກ້າທີ່ສູ້ຊົນເພື່ອເອົາຊະນະມາຕັ້ງແຕ່ບູຮານນະການ (ບໍ່ແສງຄຳ ວົງດາລາ ແລະຄະນະ, 1987).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ເນື້ອໃນຂອງເທບນິຍາຍ
  - ສິລະປະຂອງເທບນິຍາຍ

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

- **ຂັ້ນຕັກເຕືອນ**
  - ຄູແນະນຳນັກຮຽນອ່ານບົດຮຽນໃໝ່
  - ສຶກສາແນວຄິດຂອງຜູ້ຮຽນ
  - ມອບວຽກບ້ານ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ແລະຄະນະ. (2001). ວັນນະຄະດີລາວ ລະຫັດ 630LI 222. ວິທະຍາໄລ ວິທະຍາສາດພື້ນຖານ. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ.

ອ່ອນແກ້ວ ນອນນະວົງ ແລະຄະນະ. (2008). ແບບຮຽນວັນນະຄະດີຊັ້ນມັດທະຍົມສຶກສາ ປີທີ ສີ່. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ບໍ່ແສງຄຳ ວົງດາລາ ແລະຄະນະ. (1987). ວັນນະຄະດີລາວ. ກະຊວງສຶກສາທິການ. ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ.

ພູວົງ ໝໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈຳວິຊາ

ປທ.ສົມທະເພີຍ ສີວົງສັກ